ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----------

ທະນາຄານ ແຫ່ງ ສປປລາວ

ຫ້ອງການ

ເລກທີ 07 /ຫກ

ນະຄອນຫລວງວຽງຈັນ,ວັນທີ 03 JAN 2017

ສຳນັກງານ ຄຄຊ
ເລກທີ 0011
ວັນທີ 04 JAN 2017
ໂທລະສັບ 021 217770

## ແຈ້ງການ

**ເຖິງ :** ບັນດາກົມ ແລະ ທຽບເທົ່າກົມພາຍໃນ ທະນາຄານ ແຫ່ງ ສປປລາວ

**ເລື່ອງ :** ການສົ່ງໃບຄິດໄລ່ເງິນແຮງງານ ແລະ ກຳນົດວັນເບີກຈ່າຍເງິນເດືອນ.

- ເພື່ອເຮັດໃຫ້ການເບີກຈ່າຍເງິນເດືອນປະຈຳເດືອນ ຂອງພະນັກງານ ທະນາຄານ ແຫ່ງ ສປປລາວ ຖືກກັບເວລາທີ່ກຳນົດໄວ້.

ຫ້ອງການ ທະນາຄານ ແຫ່ງ ສປປລາວ, ຂໍແຈ້ງມາຍັງບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ ຊາບວ່າ: ກ່ຽວກັບການເບີກຈ່າຍເງິນແຮງງານ ແລະ ເງິນເດືອນ ໃຫ້ພະນັກງານແຕ່ລະເດືອນ **ແມ່ນຈະເບີກຈ່າຍໃນ ວັນທີ 26 ຂອງທຸກໆທ້າຍເດືອນ.** ສະນັ້ນເພື່ອໃຫ້ຖືກຕ້ອງກັບເວລາທີ່ກຳນົດໄວ້ຈຶ່ງສະເໜີ ໃຫ້ແຕ່ລະກົມທີ່ມີການເຮັດວຽກນອກໂມງຂອງຕົນສົ່ງໃບຄິດໄລ່ເງິນແຮງງານໃຫ້ຫ້ອງການ (ພະແນກການເງິນ) ທຫລ, **ບໍ່ໃຫ້ກາຍ ວັນທີ 18 ຂອງທຸກໆເດືອນ.** ເພື່ອຈະໄດ້ຄິດໄລ່ໃຫ້ທັນເວລາກັບການເບີກຈ່າຍເງິນໃນແຕ່ລະເດືອນ, ຖ້າກາຍເວລາທີ່ກຳນົດໄວ້ແລ້ວແມ່ນຈະໄດ້ເລື່ອນໄປຄິດໄລ່ໃນເດືອນຕໍ່ໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງຊາບ ແລະ ປະຕິບັດຕາມໃບແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າຫ້ອງການ ທະນາຄານ ແຫ່ງ ສປປລາວ**

ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ